ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 0837 /ກປ -ຟ

ນະຄອນຫຼວງວຽງຈັນ, ວັນທີ 03 APR 2013

# ຄຳສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບການອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate - PC)

ເຖິງ: - ທ່ານຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງ ໃນຂອບເຂດທົ່ວປະເທດ;
- ທ່ານຫົວໜ້າດ່ານປ້ອງກັນພືດສາກົນ ໃນຂອບເຂດທົ່ວປະເທດ.

– ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 9 ທັນວາ 2008;
– ອີງຕາມດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 229/ລບ, ລົງວັນທີ 31 ພຶດສະພາ 2012;
– ອີງໃສ່ໜັງສືສະເໜີຂອງກົມປູກຝັງ ເລກທີ 0528/ກປຝ, ລົງວັນທີ 19 ມີນາ 2013.

ໃນໄລຍະຜ່ານມາ ພວກເຮົາໄດ້ນຳໃຊ້ໃບຢັ້ງຢືນສຸຂານາໄມພືດ ຕາມລະບົບຖານຂໍ້ມູນການອອກໃບຢັ້ງຢືນສຸຂານາໄມພືດແຫ່ງຊາດ (National Phytosanitary certificate Database – NPD) ມາແຕ່ປີ 2004 ຊຶ່ງເປັນມາດຕະການໜຶ່ງໃນຫຼາຍໆມາດຕະການ ທີ່ລະບຸໄວ້ໃນດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ອັນໄດ້ປະກອບສ່ວນເຮັດໃຫ້ການສະກັດກັ້ນການແຜ່ລະບາດຂອງສັດຕູພືດ ຈາກພາຍໃນ ອອກສູ່ພາຍນອກ, ຈາກພາຍນອກ ເຂົ້າມາ ສປປ ລາວ ໄດ້ດີໂດຍພື້ນຖານ; ແຕ່ເນື່ອງຈາກວ່າ: ໃນປະຈຸບັນນີ້ ສປປ ລາວ ພວກເຮົາ ໄດ້ຖືກຮັບເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ນິຕິກຳ ແລະລະບຽບການຫຼາຍອັນ ລວມທັງການອອກໃບຢັ້ງຢືນສຸຂານາໄມພືດ (PC) ຈຳເປັນຕ້ອງໄດ້ປັບປຸງໃຫ້ສອດຄ່ອງກັບລະບຽບການຂອງສົນທິສັນຍາປ້ອງກັນພືດສາກົນ (IPPC).

ເພື່ອເຮັດໃຫ້ການອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate - PC) ແບບໃໝ່ ຂອງ ສປປ ລາວ ຖືກນຳໃຊ້ຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ທັງສອດຄ່ອງກັບກົດໝາຍ ແລະສົນທິສັນຍາປ້ອງກັນພືດນັ້ນ,

## ລັດຖະມົນຕີ ວ່າການກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ທີ່ມີ "ດ່ານປ້ອງກັນພືດສາກົນ" ນຳໃຊ້ແບບຟອມໃບຢັ້ງຢືນສຸຂານາໄມພືດ (Phytosanitary certificate - PC) ແບບໃໝ່ ມີກາປະທັບດຽວທີ່ເປັນເອກະພາບໃນທົ່ວປະເທດ ຕາມທີ່ໄດ້ຄັດຕິດມາພ້ອມນີ້ ນັບແຕ່ວັນທີ 18 ເດືອນເມສາ 2013 ເປັນຕົ້ນໄປ;
2. ບັນດາ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ທີ່ມີ "ດ່ານປ້ອງກັນພືດສາກົນ" ມີຄວາມຮັບຜິດຊອບໃນການຂຶ້ນແຜນງົບປະມານ ເພື່ອປົກປັກຮັກສາ, ພັດທະນາ ແລະຕິດຕັ້ງລະບົບຖານຂໍ້ມູນແບບໃໝ່ນີ້ ປ່ຽນແທນລະບົບຖານຂໍ້ມູນໃນປະຈຸບັນ;

3. ໃຫ້ ກົມປູກຝັງ ແຈ້ງໃຫ້ຄະນະເລຂາທິການສົນທິສັນຍາປ້ອງກັນພືດສາກົນ (IPPC) ເພື່ອແຈ້ງຕໍ່ໄປຍັງບັນດາປະເທດທີ່ເປັນພາຄີສົນທິສັນຍາປ້ອງກັນພືດສາກົນ ໄດ້ຮັບຊາບເຖິງການປ່ຽນແປງໃບຢັ້ງຢືນສຸຂານາໄມພືດ (PC) ຂອງ ສປປ ລາວ;
4. ມອບໃຫ້ ກົມປູກຝັງ ສ້າງເປັນແຜນຝຶກອົບຮົມເຕັກນິກການກວດກາພືດ, ຜະລິດຕະພັນພືດ, ວັດຖຸອື່ນ ແລະແນະນຳການອອກໃບຢັ້ງຢືນສຸຂານາໄມພືດ (PC) ຕາມມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ຂອງສົນທິສັນຍາປ້ອງກັນພືດສາກົນ (ISPMs, IPPC) ແລະຂໍ້ຕົກລົງສຸຂານາໄມ ແລະສຸຂານາໄມພືດ (SPS Agreement) ຂອງອົງການການຄ້າໂລກ (WTO) ເພື່ອອຳນວຍຄວາມສະດວກທາງດ້ານການຄ້າ ຕາມລະບຽບກົດໝາຍ;
5. ມອບໃຫ້ ດ່ານປ້ອງກັນພືດ ຮັບຜິດຊອບ ກວດກາພືດ ແລະລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ (PC) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ກ່ຽວກັບສິດ ແລະໜ້າທີ່ຂອງເຈົ້າໜ້າທີ່ປ້ອງກັນພືດ, ມາດຕາ V (Article V: Phytosanitary certification) ຂອງສົນທິສັນຍາປ້ອງກັນພືດສາກົນ (IPPC) ແລະຈັດຕັ້ງປະຕິບັດມາດຕາ 26 ຂອງດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດທີ່ລະບຸກ່ຽວ ກັບການກວດກາ ແລະການຢັ້ງຢືນການສົ່ງອອກ ຢ່າງເຂັ້ມງວດ;
6. ຜູ້ຮັບຜິດຊອບ ຫຼືເຈົ້າໜ້າທີ່ປ້ອງກັນພືດ ຜູ້ທີ່ມີສິດລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ (PC) ຕ້ອງໄດ້ຮັບການແຕ່ງຕັ້ງ ຈາກລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະປ່າໄມ້ ແລະການຢັ້ງຢືນຂອງຄະນະຈັດຕັ້ງແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ ແລະຢູ່ພາຍໃຕ້ການຄຸ້ມຄອງດ້ານວິຊາການ ແລະການຕິດຕາມກວດກາ ຂອງ ກົມປູກຝັງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງດຳລັດແນະນຳປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ;
7. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ວິໄລວັນ ພົມເຂ

<u>ບ່ອນນຳສົ່ງ</u>:

| | |
|---|---|
| 1. ຫ້ອງວ່າການສູນກາງພັກ | 01 ສະບັບ (ໃຊ້ຕາງລາຍງານ); |
| 2. ຫ້ອງວ່າການລັດຖະບານ | 01 ສະບັບ (ໃຊ້ຕາງລາຍງານ); |
| 3. ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 4. ກະຊວງສາທາລະນະສຸກ | 01 ສະບັບ (ເພື່ອຊາບ); |
| 5. ລັດຖະມົນຕີຊ່ວຍວ່າການ ທ່ານລະ | 01 ສະບັບ (ເພື່ອຊາບ); |
| 6. ຫ້ອງການກະຊວງ | 01 ສະບັບ (ເພື່ອຕິດຕາມ); |
| 7. ກົມປູກຝັງ | 01 ສະບັບ (ເພື່ອປະຕິບັດ); |
| 8. ກົມຈັດຕັ້ງ ແລະພະນັກງານ | 01 ສະບັບ (ເພື່ອຊາບ); |
| 9. ກົມກວດກາ | 01 ສະບັບ (ເພື່ອຊາບ); |
| 10. ກົມແຜນການ ແລະການຮ່ວມມື | 01 ສະບັບ (ເພື່ອຊາບ); |
| 11. ຫ້ອງວ່າການປົກຄອງແຂວງ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊີ້ນຳ); |
| 12. ເກັບມ້ຽນ | 01 ສະບັບ. |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LAO PEOPLE'S DEMOCRATIC REPUBLIC
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
PEACE INDEPENDENCE DEMOCRACY UNITY PROSPERITY

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

**ORIGINAL**

# ໃບຢັ້ງຢືນ ສຸຂານາໄມພືດ
# PHYTOSANITARY CERTIFICATE

ຈາກ:
FROM:

ເຖິງ:
TO:

## I. ປະເພດສິນຄ້າ/DESCRIPTION OF CONSIGNMENT

ຊື່ ແລະ ທີ່ຢູ່ ຂອງ ຜູ້ສົ່ງອອກ
Name and address of exporter

ຊື່ ແລະ ທີ່ຢູ່ ຂອງ ຜູ້ຮັບ
Declared name and address of consignee

ຈຳນວນ ແລະ ລັກສະນະການຫຸ້ມຫໍ່
Number and description of packages

ເຄື່ອງໝາຍທີ່ເດັ່ນ
Distinguishing marks

ແຫຼ່ງທີ່ມາ ຂອງ ສິນຄ້າ
Place of origin

ວິທີການຂົນສົ່ງ
Declared means of conveyance

ຈຸດແຈ້ງ ການນຳເຂົ້າ
Declared point of entry

ຊື່ ຂອງ ສິນຄ້າ ແລະ ຈຳນວນທີ່ແຈ້ງ
Name of product and quantity declared

ຊື່ວິທະຍາສາດ ຂອງ ພືດ
Botanical nameof plants

ຂໍຢັ້ງຢືນວ່າ ພືດ ແລະ ຜະລິດຕະພັນພືດ ຫຼື ວັດຖຸອື່ນ ທີ່ງນັ້ນ ໄດ້ຜ່ານ ການກວດກາ ແລະ ພົບວ່າ ປອດສັດຕູພືດຕ້ອງຫ້າມ ແລະ ສັດຕູພືດອື່ນໆ ທີ່ເປັນອັນຕະລາຍ ຊຶ່ງສອດຄ່ອງກັບ ລະບຽບການປ້ອງກັນພືດ ຂອງ ປະເທດ ທີ່ນຳເຂົ້າ.

This is to certify that the plant and plant products or other regulated articles described herein have been inspected and/or tested according to appropriate official procedures and are considered to be free from the quarantine pests specified by the importing contracting party and to conform with the current phytosanitary requirements of the importing contracting party, including those for regulated non-quarantine pest.

## II. ແຈ້ງເພີ່ມເຕີມ(ຖ້າມີ)/ADDITIONAL DECLARATION

## III. ການເຮັດຄວາມສະອາດ ແລະ ການຂ້າເຊື້ອ/DISINFESTATION AND/OR DISINFECTION TREATMENT

ວັນທີ ເຮັດຄວາມສະອາດຂ້າເຊື້ອ
Treatment Date:

ວິທີເຮັດຄວາມສະອາດຂ້າເຊື້ອ
Treatment:

ສານເຄມີ (ສ່ວນປະກອບທີ່ອອກລິດ)
Chemical (Active ingredients):

ໄລຍະເວລາ ແລະ ອຸນຫະພູມ
Duration & temperature:

ຄວາມເຂັ້ມຂຸ້ນ
Concentration:

ຂໍ້ມູນເພີ່ມເຕີມ
Additional Information:

ວັນທີ ກວດກາ
Date Inspected:

ຊື່ ແລະ ລາຍເຊັນເຈົ້າໜ້າທີ່ປ້ອງກັນພືດ
Name and Signature of Authorized Officer

MINISTRY OF AGRICULTURE AND FORESTRY
PLANT QUARANTINE AUTHORITY OF LAO PDR
DEPARTMENT OF AGRICULTURE

ວັນທີ ອອກໃບຢັ້ງຢືນ
Date Issued:

ສະຖານທີ່ ອອກໃບຢັ້ງຢືນ
Place of Issued:

Department of Agriculture, Lane Xang Avenue, Patuxay Square, P.O.Box:811, Vientiane, Lao PDR. Tel: (+856) 21 412350; Fax: (+856) 21 412349
E-mail: doag@laotel.com

00 000000

SPECIMEN

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
LAO PEOPLE'S DEMOCRATIC REPUBLIC
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
PEACE INDEPENDENCE DEMOCRACY UNITY PROSPERITY

**copy**

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

# ໃບຢັ້ງຢືນ ສຸຂານາໄມພືດ
# PHYTOSANITARY CERTIFICATE

| ຈາກ: FROM: | ເຖິງ: TO: |
|---|---|

**I. DESCRIPTION OF CONSIGNMENT**

| | | |
|---|---|---|
| Name and address of exporter | | Declared name and address of consignee |
| Number and description of packages | | Distinguishing marks |
| Place of origin | Declared means of conveyance | Declared point of entry |
| Name of product and quantity declared | | Botanical name of plants |

This is to certify that the plant and plant products or other regulated articles described herein have been inspected and/or tested according to appropriate official procedures and are considered to be free from the quarantine pests specified by the importing contracting party and to conform with the current phytosanitary requirements of the importing contracting party, including those for regulated non-quarantine pest.

**II. ADDITIONAL DECLARATION**

PLANT QUARANTINE AUTHORITY OF LAO PDR

SPECIMEN

**III. DISINFESTATION AND/OR DISINFECTION TREATMENT**

| | |
|---|---|
| Treatment Date | Treatment |
| Chemical (Active Ingredient) | Duration & temperature |
| Concentration | Additional Information |

Date inspected

Date issued

Place of issued

Name and Signature of Authorized Officer

PLANT QUARANTINE AUTHORITY OF LAO PDR – DEPARTMENT OF AGRICULTURE

Department of Agriculture, Lane Xang Avenue, Patuxay Square, P.O.Box 811, Vientiane, Lao PDR. Tel: (+856) 21 412350, Fax: (+856) 21 412349
E-mail: doag@laotel.com

00 000000

ສະບັບເກົ່າ

LAO PEOPLE'S DEMOCRATIC REPUBLIC
PEACE INDEPENDENCE DEMOCRACY UNITY PROSPERITY

MINISTRY OF AGRICULTURE AND FORESTRY
DEPARTMENT OF AGRICULTURE

ORIGINAL

# PHYTOSANITARY CERTIFICATE No.

SPECIMEN

| From : Plant Protection Organization of | To : Plant Protection Organization(s) of |
|---|---|
| | |

## I. DESCRIPTION OF CONSIGNMENT

| Name and address of exporter | Declared name and address of consignee |
|---|---|
| | |
| Number and description of packages | Distinguishing marks |
| | |
| Place of Origin / Declared means of conveyance | Declared point of entry |
| | |
| Name of produce and quantity declared | Botanical name of plants |
| | |

This is to certify that the plant and plant products or other regulated articles described herein have been inspected and or tested according to appropriate official procedures and are considered to be free from the quarantine pests specified by the importing contracting party and to conform with the current phytosanitary requirements of the importing contracting party including those for regulated non-quarantine pests.

## II. ADDITIONAL DECLARATION

## III. DISINFESTATION AND / OR DISINFECTION TREATMENT

| Treatment Date | Treatment |
|---|---|
| Chemical (Active ingredients) | Duration & Temperature. |
| Concentration | Additional Information |

| | |
|---|---|
| [illegible] | Name and Signature of Authorized Officer |
| Date issued | |
| [illegible] | |